ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 45 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 17 ກຸມພາ 2020

# ແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ເພີ່ມທະວີສະຕິລະວັງຕົວໃນການຮັບ-ຈ່າຍທະນະບັດ ປະເພດໃບ 50.000 ກີບ.

ຫ້ອງການ ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງ ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານ, ທະຫານ ແລະ ຕຳຫຼວດ ໃນຂອບເຂດທົ່ວປະເທດ ຊາບວ່າ: ປະຈຸບັນໄດ້ມີກຸ່ມຄົນບໍ່ດີຈຳນວນໜຶ່ງ ລັກລອບປອມແປງທະນະບັດ ປະເພດໃບ 50.000 ກີບ ອອກມາຈໍລະຈອນໃຊ້ຈ່າຍໃນສັງຄົມ ດ້ວຍຮູບແບບການນຳເອົາທະນະບັດແທ້ໄປອັດສຳເນົາສີ (Copy) ໃສ່ເຈ້ຍ A4 ທຳມະດາ, ເຮັດໃຫ້ມີສີສັນລວດລາຍຄ້າຍຄືກັບທະນະບັດແທ້, ຊຶ່ງເຈົ້າໜ້າທີ່ໄດ້ກວດພົບເຫັນໃນປະຈຸບັນ ຢູ່ເຂດເມືອງຫີນບູນ ແຂວງຄຳມ່ວນ, ຊຶ່ງທະນະບັດປອມທີ່ພົບເຫັນມີໝາຍເລກລຳດັບ AW 4078060, AZ 6904475 ແລະ AZ 9832262;

ສະນັ້ນ, ກ່ອນຈະຮັບ-ຈ່າຍທະນະບັດ ປະເພດໃບ 50.000 ກີບ ທຸກໆຄັ້ງ ກະລຸນາກວດກາເບິ່ງໃຫ້ລະອຽດ ເພື່ອຫຼີກເວັ້ນການຮັບ-ຈ່າຍທະນະບັດປອມ ແລະ ທ່ານສາມາດສັງເກດວິທີເບິ່ງທະນະບັດແທ້-ທະນະບັດປອມ ຂັ້ນພື້ນຖານດ້ວຍຕົວຂອງທ່ານເອງ, ດັ່ງລາຍລະອຽດລຸ່ມນີ້:

**ທະນະບັດແທ້**






1. ເຈ້ຍພິມທະນະບັດ ຜະລິດຈາກຝ້າຍ 100% ມີຄວາມແຕກຕ່າງກັບເຈ້ຍທົ່ວໄປ ເມື່ອເອົາມືສຳຜັດຈະຮູ້ສຶກຫຍາບ ແລະ ຊາ, ມີຄວາມຄົງທົນຕໍ່ສະພາບອາກາດປຽກຊຸ່ມ.

**ທະນະບັດປອມ**






1. ເຈ້ຍພິມທະນະບັດປອມເປັນເຈ້ຍທຳມະດາ ເມື່ອເອົາມືສຳຜັດຈະຮູ້ສຶກໜື້ນ ບໍ່ມີຄວາມຄົງທົນຕໍ່ສະພາບອາກາດປຽກຊຸ່ມ.

2. ຄໍາຂ້ວນ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຮູບພາບປະທານ ໄກສອນ ພົມວິຫານ ຢູ່ດ້ານໜ້າທະນະບັດ, ຕົວເລກມູນຄ່າ **໕໐໐໐໐** ຢູ່ດ້ານລຸ່ມເບື້ອງຊ້າຍທະນະບັດ ເມື່ອສໍາຜັດດ້ວຍປາຍນິ້ວມື **ຈະຮູ້ສຶກສະດຸດມື.**

2. ຄໍາຂ້ວນ: ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຮູບພາບປະທານ ໄກສອນ ພົມວິຫານ ຢູ່ດ້ານໜ້າທະນະບັດ, ຕົວເລກມູນຄ່າ **໕໐໐໐໐** ຢູ່ດ້ານລຸ່ມເບື້ອງຊ້າຍທະນະບັດ ເມື່ອສໍາຜັດດ້ວຍປາຍນິ້ວມື**ຈະບໍ່ຮູ້ສຶກສະດຸດມື.**

3. ຮູບລາຍນໍ້າ ປະທານ ໄກສອນ ພົມວິຫານ ເປັນຮູບດຽວກັບຮູບທີ່ຢູ່ດ້ານໜ້າຂອງທະນະບັດ ຝັງຢູ່ໃນເນື້ອເຈ້ຍສາມາດເບິ່ງເຫັນໄດ້ຊັດເຈນທັງດ້ານໜ້າ ແລະ ດ້ານຫຼັງ ເມື່ອຍົກສ່ອງໃສ່ກັບແສງສະຫວ່າງ.

3. ຮູບລາຍນໍ້າ ປະທານ ໄກສອນ ພົມວິຫານ ເປັນຮູບພິມດ້ວຍມຶກສີດຽວ ຈະບໍ່ຝັງໃນເນື້ອເຈ້ຍ ຈະເຫັນເປັນຮູບແຕ້ມທໍາມະດາ ເມື່ອຍົກສ່ອງໃສ່ກັບແສງສະຫວ່າງ.

4. ສ່ອງໃສ່ແສງໄຟສີມ່ວງ **(Black Light)**

**ທະນະບັດແທ້**







**ທະນະບັດປອມ**





ເມື່ອນໍາທະນະບັດ ສ່ອງໃສ່ແສງໄຟສີມ່ວງ **(Black Light)** ເຄື່ອງໝາຍຊາດ, ຮູບທາດຫຼວງ, ສປປ ລາວ ຕົວເລກມູນຄ່າ **໕໐໐໐໐** ຢູ່ດ້ານເທິງເບື້ອງຂວາທະນະບັດ, ເສັ້ນໄຍສັງເຄາະສີຟ້າ ແລະ ສີແດງ **ຈະເຮືອງແສງ.**

ເມື່ອນໍາທະນະບັດສ່ອງໃສ່ແສງໄຟສີມ່ວງ **(Black Light)** ເຄື່ອງໝາຍຊາດ, ຮູບທາດຫຼວງ, ສປປ ລາວ ຕົວເລກມູນຄ່າ **໕໐໐໐໐** ຢູ່ດ້ານເທິງເບື້ອງຂວາທະນະບັດ, ເສັ້ນໄຍສັງເຄາະ ສີຟ້າ ແລະ ສີແດງ **ຈະບໍ່ເຮືອງແສງ.**

5. ການປອມແປງທະນະບັດ ຫຼື ການໃຊ້ທະນະບັດປອມ ຈະມີຄວາມຜິດຕາມ ມາດຕາ 129 ຂອງປະມວນກົດໝາຍອາຍາ ສະບັບເລກທີ 26/ສພຊ, ລົງວັນທີ 17 ພຶດສະພາ 2017 ແລະ ກົດໝາຍກ່ຽວຂ້ອງ;

6. ຖ້າພົບເຫັນທະນະບັດປອມ, ການນໍາໃຊ້ທະນະບັດປອມເຂົ້າໃນການຊໍາລະສະສາງຊື້ສິນຄ້າ ແລະ ບໍລິການ ກະລຸນາແຈ້ງເຈົ້າໜ້າທີ່ຕໍາຫຼວດ ຫຼື ທະນາຄານແຫ່ງ ສປປ ລາວ (ກົມເງິນຕາ) 021 213119, ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ແລະ ທະນາຄານທຸລະກິດ ທຸກແຫ່ງໃນຂອບເຂດທົ່ວປະເທດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈົ່ງມີສະຕິລະວັງຕົວບໍ່ຫຼົງເຊື່ອຕໍ່ການໂຄສະນາ ຊວນເຊື່ອໃນຮູບແບບຕ່າງໆຂອງກຸ່ມຄົນບໍ່ດີ ທີ່ຈະສ້າງຄວາມປັ່ນປ່ວນ ຢູ່ໃນສັງຄົມ.

**ຫົວໜ້າຫ້ອງການ**

ເພັດສະຖາພອນ ແກ້ວວົງວິຈິດ